ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2020 ແລະ ແຜນການປີ 2021, ພິທີມອບ-ຮັບ ໃບຢັ້ງຢືນກຳມະບານ 5 ເປັນເຈົ້າ ແລະ ຮັບສະມາຊິກໃໝ່




ໃນຕອນເຊົ້າຂອງວັນທີ 01 ມິຖຸນາ 2021 ໜ່ວຍກຳມະບານສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ຈັດກອງປະຊຸມ ຂຶ້ນທີ່ຫ້ອງປະຊຸມ ທຫລ.ຊຂ ໂດຍໃຫ້ກຽດເປັນປະທານ ຂອງ ສະຫາຍ ວິສອນ ໄຊສິງຄາມ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກເໜືອ ແຂວງ ຊຽງຂວາງ ທັງເປັນຜູ້ຊີ້ນຳວຽກງານສາມອົງການຈັດຕັ້ງມະຫາຊົນ ທຫລ.ຊຂ, ມີຄະນະສາຂາ, ຄະນະພະແນກ, ຕາງໜ້າໜ່ວຍຊາວໜຸ່ມ, ໜ່ວຍແມ່ຍິງ ແລະ ສະມາຊິກກຳມະບານ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ສະຫາຍ ນາງ ທິບພະພອນ ເຂັ້ມມານິດ ປະທານກວດກາໜ່ວຍກຳມະບານ ໄດ້ຂຶ້ນຜ່ານບົດສະຫຼຸບການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 5 ເປັນເຈົ້າປະຈຳປີ 2020 ແລະ ແຜນການປີ 2021 ໂດຍໃຫ້ຮູ້ວ່າ: ໜ່ວຍກຳມະບານສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ໃຫ້ສະມາຊິກສະມາຊິກກຳມະບານເປັນປົກກະຕິ ດ້ວຍຫຼາຍຮູບການ ໂດຍ ຜ່ານຂະບວນການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ, ໜ່ວຍພັກ, ການຈັດຕັ້ງລັດ ແລະ ໄດ້ຮ່ວມຊີວິດການເມືອງເປັນປົກກະຕິ ແລະ ໄດ້ຖືເອົາຂໍ້ແຂ່ງຂັນ 5 ເປັນເຈົ້າເປັນຕົວຊີ້ວັດ ເພື່ອເຮັດໃຫ້ສະມາຊິກກຳມະບານ ພາຍໃນໜ່ວຍ ມີແນວຄິດອຸ່ນອ່ຽນ, ທຸ່ນທ່ຽງ, ເຊື່ອມຊຶມ ແລະ ຮັບຮູ້ໄດ້ເຖິງແນວທາງນະໂຍບາຍຕ່າງໆຂອງພັກ-ລັດວາງອອກໃນແຕ່ລະໄລຍະ.

ຫຼັງຈາກນັ້ນ, ກໍ່ໄດ້ຜ່ານຂໍ້ຕົກລົງວ່າດ້ວຍການຢັ້ງຢືນກຳມະບານ 5 ເປັນເຈົ້າ ສະບັບເລກທີ 38/ກບຂ, ລົງວັນທີ 19 ກຸມພາ 2021 ແລະ ໃຫ້ກຽດມອບໃບຢັ້ງຢືນໂດຍ ສະຫາຍ ວິສອນ ໄຊສິງຄາມ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ແລະ ຮັບເອົາແມ່ນ ສະຫາຍ

ວຽງວິໄລ ສຸດທິຈັກ ປະທານໜ່ວຍກຳມະບານ ທຫລ.ຊຂ. ພ້ອມດຽວກັນນີ້, ກໍ່ຍັງໄດ້ຜ່ານຂໍ້ຕົກລົງ ເລກທີ 47/ກບຂ, ລົງວັນທີ 22 ກຸມພາ 2021 ວ່າດ້ວຍການຮັບມະຫາຊົນຜູ້ກ້າວໜ້າເຂົ້າເປັນສະມາຊິກກຳມະບານລາວ ຈຳນວນ 03 ສະຫາຍ.






ໃນຕອນທ້າຍ ສະຫາຍ ວິສອນ ໄຊສີງຄາມ ເລຂາຄະນະພັກຮາກຖານ, ຫົວໜ້າສາຂາ ທຫລ ພາກເໜືອ ແຂວງຊຽງຂວາງ ຍັງໄດ້ຍ້ອງຍໍຊົມເຊີຍຜົນສຳເລັດ ແລະ ຜົນງານທີ່ຍາດມາໄດ້ນັ້ນ, ພ້ອມທັງເນັ້ນໜັກແຕ່ລະຈຸດທີ່ສຳຄັນກ່ຽວກັບການເຄື່ອນໄຫວວຽກງານຂອງໜ່ວຍກຳມະບານໃນໄລຍະຜ່ານມາ, ຮຽກຮ້ອງໃຫ້ສະມາຊິກກຳມະບານທຸກສະຫາຍ ຈະຕ້ອງໄດ້ປັບປຸງແກ້ໄຂຂໍ້ຄົງຄ້າງຂອງການປະຕິບັດວຽກງານໃຫ້ມີຜົນສຳເລັດເປັນກ້າວໆ, ມີຄວາມອຸ່ນອຽນທຸ່ນທ່ຽງໃນການປະຕິບັດໜ້າທີ່ການເມືອງ, ມີສະຕິເຄົາລົບນັບຖືການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ກໍ່ຄືການຈັດຕັ້ງຜັນຂະຫຍາຍບັນດາຄາດໝາຍຂອງຄະນະພັກຂັ້ນເທິງ, ຂັ້ນຂອງຕົນວາງອອກຕາມແຜນການ, ຕາມໂຄງການດຳເນີນງານເຫັນວ່າມີຜົນສຳເລັດເປັນຢ່າງດີ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອຄວາມເຂັ້ມແຂງຂອງອົງການ, ພ້ອມທັງຮ່ວມກັນອອກແຮງແຂ່ງຂັນປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ໃຫ້ປະກົດຜົນເປັນຈິງ.

**ຂ່າວ: ສຸກສະຫວັນ ພົມມະວົງ**